ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016
ສະຫງວນລິຂະສິດ

ປຶ້ມຝຶກຫັດ

# ໜ່ວຍບ້ານຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

## ປຶ້ມເຝິກຫັດ

# ໜ່ວຍບ້ານຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3


ຮຽບຮຽງໂດຍ: ແສງມະນີ ສຸພັນທະລິບ
ຊໍ່ເນັ່ງ ຢົງເນັ່ງຊົງ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ເກດ ພັນລັກ

ພິມເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດ ຫຼາຍຂຶ້ນ.

ປຶ້ມບົດເຝິກຫັດພ່ວຍບ້ານຂອງຂ້ອຍເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 5 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງບ້ານມີດັ່ງນີ້:

1. ບ້ານ.
2. ອາຊີບ.
3. ສິລະປະວັດທະນະທຳ ແລະ ວັນບຸນປະເພນີ.
4. ປະເທດລາວ ແລະ ວັນສຳຄັນຂອງຊາດ.

ການນຳໃຊ້ປຶ້ມບົດເຝິກຫັດພ່ວຍບ້ານຂອງຂ້ອຍ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ


**ໜ່ວຍບ້ານຂອງຂ້ອຍ** ........ **1**

**1. ບ້ານ ອາທິດທີ 1** ........ **2**

- ບ້ານ ແລະ ສະຖານທີ່ສຳຄັນພາຍໃນບ້ານ ........ 3
- ຫ້ອງການປົກຄອງບ້ານ ........ 4
- ວັດ ........ 5
- ສະຖານທີ່ທ່ອງທ່ຽວ ........ 6
- ໂຮງຮຽນ ........ 7
- ສຸກສາລາ ........ 8
- ຕະຫຼາດ ........ 9
- ເດີ່ນກິລາ ........ 10

**2. ອາຊີບຂອງຄົນໃນບ້ານ ອາທິດທີ 2** ........ **11**

- ນາຍຄູ ........ 12
- ແພດ ........ 13
- ຊາວນາ ........ 14
- ຊາວສວນ ........ 15
- ພໍ່ຄ້າ, ແມ່ຄ້າ ........ 16
- ຕຳຫຼວດ ........ 17
- ທະຫານ ........ 18
- ກຳມະກອນ ........ 19
- ຊ່າງເສີມສວຍ, ຊ່າງແປງລົດ ແລະ ຊ່າງຕັດເຄື່ອງ ........ 20

**3. ສິລະປະວັດທະນະທຳ ແລະ ວັນບຸນປະເພນີ ອາທິດທີ 3** ........ **21**

- ສິລະປະວັນນະຄະດີ ແລະ ເຄື່ອງດົນຕີພື້ນເມືອງ ........ 22
- ຫັດຖະກຳພື້ນເມືອງ ........ 23
- ແບບຫຼິ້ນພື້ນເມືອງ ........ 24
- ບຸນເຂົ້າພັນສາ ແລະ ອອກພັນສາ ........ 25
- ບຸນພະເວດ ແລະ ປີໃໝ່ລາວ ........ 26

**4. ປະເທດລາວ ແລະ ວັນສຳຄັນຂອງຊາດ ອາທິດທີ 4........ 27**
- ປະເທດລາວ ແລະ ແຂວງຕ່າງໆ........ 28
- ວັນຊາດລາວ........ 29
- ທຸງຊາດໃນກຸ່ມປະເທດອາຊຽນ........ 30
- ການສະເຫຼີມສະຫຼອງວັນຊາດ........ 31
- ວັນແມ່ຍິງ........ 32
- ວັນຄູ........ 33
- ວັນກຳມະກອນ........ 34
- ວັນສ້າງຕັ້ງກອງທັບ........ 35
- ວັນເດັກນ້ອຍສາກົນ........ 36

# ບ້ານຂອງຂ້ອຍ










**ຫົວຂໍ້ ການຮຽນຂອງແຕ່ລະອາທິດໜ່ວຍບ້ານຂອງຂ້ອຍປະກອບມີ:**

1. ບ້ານ.
2. ອາຊີບ.
3. ສິລະປະວັດທະນະທຳ ແລະ ວັນບຸນປະເພນີ.
4. ປະເທດລາວ ແລະ ວັນສຳຄັນຂອງຊາດ.

# ບ້ານ















## ຫົວຂໍ້ການຮຽນອາທິດທີ 1 ບ້ານ:

1. ບ້ານ ແລະ ສະຖານທີ່ສຳຄັນພາຍໃນບ້ານ.
2. ຫ້ອງການປົກຄອງບ້ານ.
3. ວັດ ແລະ ສະຖານທີ່ທ່ອງທ່ຽວ.
4. ໂຮງຮຽນ ແລະ ສຸກສາລາ.
5. ຕະຫຼາດ ແລະ ເດີ່ນກິລາ.

# ບ້ານ ແລະ ສະຖານທີ່ສຳຄັນພາຍໃນບ້ານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ບ້ານທີ່ຕົນເອງຢູ່ ແລະ ສະຖານທີ່ສຳຄັນພາຍໃນບ້ານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

## ກິດຈະກຳ:

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ບ້ານຫຼານມີຊື່ວ່າແນວໃດ? ໜ່ວຍ ແລະ ເຮືອນເລກທີເທົ່າໃດ? ສະຖານທີ່ສຳຄັນໃນບ້ານມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ສະຫຼຸບ: ຊື່ບ້ານ...... ໜ່ວຍ..... ເຮືອນເລກທີ...... ແລະ ສະຖານທີ່ສຳຄັນພາຍໃນບ້ານປະກອບມີຫ້ອງການປົກຄອງບ້ານ, ວັດ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ສຸກສາລາ, ຕະຫຼາດ ຫຼື ຮ້ານຂາຍເຄື່ອງ ແລະ ເດີ່ນກິລາ.
- ໃຫ້ເດັກນ້ອຍທາສີຮູບບ້ານ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງການປົກຄອງບ້ານ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນໃນຫ້ອງການປົກຄອງບ້ານ, ຄວາມສຳຄັນ, ໜ້າທີ່ຂອງນາຍບ້ານ, ການປະຕິບັດຕົນຕໍ່ຜູ້ໃຫຍ່ໃນບ້ານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ບຸກຄົນໃນຮູບນີ້ແມ່ນໃຜ? ໜ້າທີ່ນາຍບ້ານເຮັດຫຍັງ? ຫ້ອງການບ້ານມີຄວາມສຳຄັນແນວໃດ? ເຮົາ ຄວນປະຕິບັດແນວໃດຕໍ່ຜູ້ໃຫຍ່ພາຍໃນບ້ານ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸກຄົນໃນຫ້ອງການປົກຄອງບ້ານປະກອບມີນາຍບ້ານ, ອົງການຈັດຕັ້ງແນວໂຮມ, ສະຫະພັນແມ່ຍິງ, ຊາວໜຸ່ມ ແລະ ກອງຫຼອນ; ໜ້າທີ່ຂອງນາຍບ້ານເບິ່ງແຍງປະຊາຊົນພາຍໃນບ້ານ; ຄວາມສຳຄັນຂອງຫ້ອງການປົກຄອງບ້ານເປັນບ່ອນເຕົ້າໂຮມ, ປຶກສາຫາລືວຽກງານຕ່າງໆຂອງປະຊາຊົນພາຍໃນບ້ານ; ການປະຕິບັດຕົນ: ເຄົາລົບນັບຖື, ປະຕິບັດຕາມຄຳແນະນຳທີ່ດີຂອງຜູ້ໃຫຍ່ພາຍໃນບ້ານ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ຫ້ອງການບ້ານ ໂດຍນຳໃຊ້ສີຕາມໃຈ.

# ວັດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນທີ່ອາໄສໃນວັດ, ຄວາມສຳຄັນຂອງວັດ, ການປະຕິບັດຕົນຕໍ່ບຸກຄົນໃນວັດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

## ກິດຈະກຳ:

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ບຸກຄົນໃນຮູບນີ້ແມ່ນໃຜ? ວັດມີຄວາມສຳຄັນແນວໃດ? ຄວນປະຕິບັດຕົນແນວໃດຕໍ່ບຸກຄົນໃນວັດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸກຄົນໃນວັດປະກອບມີຄູບາ, ຈົວ, ແມ່ຂາວ ແລະ ສັງຄະລີ; ຄວາມສຳຄັນຂອງວັດເປັນບ່ອນເຄົາລົບນັບຖືທາງສາສະໜາ; ການປະຕິບັດຕົນ ນົບໄຫວ້ສະຖານທີ່ ແລະ ບຸກຄົນໃນວັດ; ການແຕ່ງຕົວ ນຸ່ງເສື້ອຂາວ ຫຼື ສີບໍ່ເຂັ້ມ, ແມ່ຍິງນຸ່ງສິ້ນ, ບ່ຽງຜ້າ, ບໍ່ເວົ້າດັງເກີນໄປ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ໂດຍນຳໃຊ້ສີຕາມໃຈ.

# ສະຖານທີ່ທ່ອງທ່ຽວ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນໃນສະຖານທີ່ທ່ອງທ່ຽວ, ຄວາມສຳຄັນ ແລະ ການປະຕິບັດຕໍ່ສະຖານທີ່ທ່ອງທ່ຽວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ບຸກຄົນໃນຮູບນີ້ມີໃຜແດ່? ສະຖານທ່ອງທ່ຽວມີຄວາມສຳຄັນແນວໃດ? ຫຼານຄວນປະຕິບັດຕົນ ແນວໃດຕໍ່ສະຖານທີ່ທ່ອງທ່ຽວ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸກຄົນໃນສະຖານທີ່ທ່ອງທ່ຽວມີຜູ້ນຳພາທ່ຽວ, ນັກທ່ອງທ່ຽວ, ຄວາມສຳຄັນຂອງສະຖານທີ່ທ່ອງທ່ຽວເປັນບ່ອນພັກຜ່ອນ ແລະ ຊົມທຳມະ ຊາດ; ການປະຕິບັດຕົນ: ລຽນແຖວຊື້ບັດເຂົ້າເບິ່ງ, ບໍ່ຈັບບາຍສິ່ງຕ່າງໆ, ບໍ່ເວົ້າສຽງດັງເກີນໄປ, ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ ແລະ ຖ່າຍໜັກ-ເບົາໃສ່ວິດຖ່າຍ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ສະຖານທີ່ທ່ອງທ່ຽວ ໂດຍນຳໃຊ້ສີຕາມໃຈ.

# ໂຮງຮຽນ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນ, ຄວາມສຳຄັນຂອງໂຮງຮຽນ, ການປະຕິບັດຕົນຕໍ່ບຸກຄົນໃນໂຮງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ບຸກຄົນໃນຮູບນີ້ມີໃຜແດ່? ໂຮງຮຽນມີຄວາມສຳຄັນແນວໃດ? ຄວນປະຕິບັດຕົນແນວໃດຕໍ່ກັບບຸກຄົນໃນ ໂຮງຮຽນ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸກຄົນໃນໂຮງຮຽນປະກອບມີຜູ້ອຳນວຍການໂຮງຮຽນ, ນາຍຄູ, ແມ່ລ້ຽງ, ພະນັກງານອະນາໄມ; ຄວາມສຳຄັນຂອງໂຮງຮຽນເປັນບ່ອນຮຽນຮູ້, ຫຼິ້ນ ແລະ ປະຕິບັດກິດຈະກຳເຄື່ອນໄຫວປະຈຳວັນຂອງນັກຮຽນ; ການປະຕິບັດຕົນ ເຄົາລົບນັບຖືບຸກຄົນໃນໂຮງຮຽນ, ຮັກແພງໝູ່ເພື່ອນ ແລະ ຮັກສາຄວາມສະອາດ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ໂດຍນຳໃຊ້ສີຕາມໃຈ.

# ສຸກສາລາ








**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນໃນສຸກສາລາ, ຄວາມສຳຄັນຂອງສຸກສາລາ ແລະ ການປະຕິບັດຕົນໃນການໄປສຸກສາລາ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ບຸກຄົນໃນຮູບນີ້ມີໃຜແດ່? ສຸກສາລາມີຄວາມສຳຄັນແນວໃດ? ເວລາໄປກວດສຸຂະພາບຢູ່ສຸກສາລາ ຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸກຄົນໃນສຸກສາລາປະກອບມີທ່ານໝໍ, ພະຍາບານ ແລະ ພະນັກງານອະນາໄມ; ຄວາມສຳຄັນຂອງສຸກສາລາ ເປັນບ່ອນປິ່ນປົວຜູ້ເຈັບປ່ວຍປະຈຳບ້ານ ແລະ ເມືອງ; ການປະຕິບັດຕົນຕ້ອງນັ່ງລໍຖ້າເຂົ້າກວດຕາມລຳດັບ, ບໍ່ເວົ້າສຽງດັງເກີນໄປ, ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ ແລະ ຖ່າຍໜັກ-ຖ່າຍເບົາໃສ່ວິດຖ່າຍ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ໂດຍນຳໃຊ້ສີຕາມໃຈ.

# ຕະຫຼາດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນໃນຕະຫຼາດ, ຄວາມສຳຄັນຂອງຕະຫຼາດ ແລະ ການປະຕິບັດຕົນໃນຕະຫຼາດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາດັ່ງນີ້: ບຸກຄົນໃນຮູບນີ້ມີໃຜແດ່? ຕະຫຼາດມີຄວາມສຳຄັນແນວໃດ? ຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸກຄົນໃນຕະຫຼາດປະກອບມີພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າ (ຜູ້ຊື້); ຄວາມສຳຄັນຂອງຕະຫຼາດເປັນບ່ອນຊື້, ຂາຍ ຫຼື ແລກປ່ຽນສິນຄ້າດ້ວຍເງິນ; ການປະຕິບັດຕົນໃນຕະຫຼາດເລືອກ ສິ່ງຂອງດ້ວຍຕົນເອງ ຫຼື ຖາມຜູ້ຂາຍ, ຄ່ອຍຈັບບາຍສິ່ງຂອງ, ຈ່າຍເງິນ ແລະ ເອົາເງິນທອນໃຫ້ຖືກຕ້ອງ, ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ໂດຍນຳໃຊ້ສີຕາມໃຈ.

# ເດີ່ນກິລາ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄົນໃນເດີ່ນກິລາ, ຄວາມສຳຄັນຂອງເດີ່ນກິລາ ແລະ ການປະຕິບັດຕົນໃນເດີ່ນກິລາ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ບຸກຄົນໃນເດີ່ນກິລາມີໃຜແດ່? ເດີ່ນກິລາຄວາມສຳຄັນແນວໃດ? ຄວນປະຕິບັດຕົນແນວໃດເມື່ອຢູ່ໃນເດີ່ນກິລາ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸກຄົນໃນເດີ່ນກິລາປະກອບມີຄະນະກຳມະການຈັດການແຂ່ງຂັນ, ກຳມະການຕັດສິນ, ນັກກິລາ ແລະ ຜູ້ຊົມ; ຄວາມສຳຄັນຂອງເດີ່ນກິລາເປັນບ່ອນຫຼິ້ນ ແລະ ແຂ່ງຂັນກິລາປະເພດຕ່າງໆ; ການປະຕິບັດຕົນໃນເດີ່ນກິລາ ລຽນແຖວຊື້ບັດເຂົ້າຊົມ, ນັ່ງຖືກບ່ອນ, ຖິ້ມຂີ້ເຫຍື້ອຖືກບ່ອນ, ຖ່າຍໜັກ-ເບົາໃສ່ວິດຖ່າຍ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ອາຊີບຂອງຄົນໃນບ້ານ













**ຫົວຂໍ້ການຮຽນອາທິດທີ 2 ອາຊີບຂອງຄົນໃນບ້ານ:**

1. ນາຍຄູ ແລະ ແພດ.
2. ຊາວນາ ແລະ ຊາວສວນ.
3. ພໍ່ຄ້າ ແລະ ແມ່ຄ້າ.
4. ຕຳຫຼວດ ແລະ ທະຫານ.
5. ກຳມະກອນ ແລະ ຊ່າງ.

# ນາຍຄູ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງນາຍຄູ; ຝຶກທັກສະການ ເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງນຸ່ງ ນາຍຄູມີຫຍັງແດ່? ນາຍຄູມີໜ້າທີ່ຫຍັງ ແລະ ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງນຸ່ງຂອງນາຍຄູມີຊຸດສີກາກີ, ມີກາທຳມະຈັກຕິດໃສ່ຄໍເສື້ອ; ໜ້າທີ່ຂອງນາຍຄູອະນຸບານພາເດັກນ້ອຍ ຫຼິ້ນ, ຮຽນ, ພັກຜ່ອນ, ກິນ, ນອນ, ອະນາໄມແຕ່ງຕົວ; ຄວາມສຳຄັນຂອງນາຍຄູ ເປັນຜູ້ຝຶກແອບສິດສອນເດັກນ້ອຍໃຫ້ເປັນຄົນດີ, ເກັ່ງ, ສະຫຼາດ ແລະ ປະກອບສ່ວນວຽກງານຕ່າງໆພາຍໃນບ້ານ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ແພດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງນຸ່ງ, ໜ້າທີ່ຂອງແພດ ແລະ ຄວາມສຳຄັນຂອງແພດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຄື່ອງນຸ່ງຂອງແພດເປັນແນວໃດ? ແພດມີໜ້າທີ່ຫຍັງ? ແພດມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງນຸ່ງຊຸດສີຂາວ, ມີກາໂຮງໝໍສີແດງຕິດໃສ່ໝວກ, ໝວກສີຂາວ; ໜ້າທີ່ຂອງແພດກວດສຸຂະພາບ ແລະ ປິ່ນປົວຄົນເຈັບ; ຄວາມສຳຄັນຂອງແພດເປັນຜູ້ແນະນຳການຮັກສາສຸຂະພາບ, ປິ່ນປົວ ແລະ ເບິ່ງແຍງຄົນເຈັບ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ໂດຍນຳໃຊ້ສີຕາມໃຈ.

# ຊາວນາ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຊາວນາ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຊາວນາມີເຄື່ອງນຸ່ງແນວໃດ? ຊາວນາມີໜ້າທີ່ຫຍັງແດ່? ຊາວນາມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງນຸ່ງມີສິ້ນ, ເສື້ອແຂນຍາວ, ໂສ້ງຂາຍາວໃສ່ກຸບ ຫຼື ໝວກ; ໜ້າທີ່ຂອງຊວນາ: ປູກເຂົ້າ (ໄຖນາ, ຫວ່ານກ້າ, ຫຼົກກ້າ, ດຳນາ) ໃສ່ຝຸ່ນ, ກ່ຽວເຂົ້າ ຫຼື ປັ່ນເຂົ້າ, ເກັບໃສ່ກະເປົ໋າ, ສີເປັນເຂົ້າສານ; ຄວາມສຳຄັນຂອງຊາວນາເປັນຜູ້ປູກເຂົ້າໃຫ້ຄົນ ແລະ ສັດກິນໃຫ້ເຕີບໃຫຍ່.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ຊາວສວນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງນຸ່ງ, ໜ້າທີ່ ແລະ ຄວາມສຳຄັນຂອງຊາວສວນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຊາວສວນມີເຄື່ອງນຸ່ງແນວໃດ? ຊາວສວນມີໜ້າທີ່ຫຍັງແດ່? ຊາວສວນມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງນຸ່ງມີເສື້ອແຂນຍາວ, ໂສ້ງຂາຍາວໃສ່ກຸບ ຫຼື ໝວກ; ໜ້າທີ່ຂອງຊາວສວນເປັນຜູ້ປູກຜັກ, ໝາກໄມ້ຊະນິດຕ່າງໆ (ຂຸດດິນ, ຖາງຫຍ້າ, ຫົດນ້ຳ, ໃສ່ຝຸ່ນ); ຄວາມສຳຄັນຂອງຊາວສວນ: ປູກຜັກ ແລະ ໝາກໄມ້ໃຫ້ຄົນ ແລະ ສັດກິນໃຫ້ແຂງແຮງ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ພືດ ໂດຍນຳໃຊ້ສີຕາມໃຈ.

# ພໍ່ຄ້າ ແລະ ແມ່ຄ້າ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກໜ້າທີ່ຂອງພໍ່ຄ້າ, ແມ່ຄ້າ ແລະ ຄວາມສຳຄັນພໍ່ຄ້າ, ແມ່ຄ້າ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

## ກິດຈະກຳ

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼາຍເຫັນໃຜແດ່? ພໍ່ຄ້າ ແລະ ແມ່ຄ້າມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄົນຂາຍເຄື່ອງເອີ້ນວ່າພໍ່ຄ້າ ຫຼື ແມ່ຄ້າ, ໜ້າທີ່ຂອງພໍ່ຄ້າ ແລະ ແມ່ຄ້າແມ່ນຂາຍເຄື່ອງກິນ, ເຄື່ອງໃຊ້, ເຄື່ອງນຸ່ງ, ເຄື່ອງຮຽນ; ຄວາມສຳຄັນຂອງພໍ່ຄ້າ ແລະ ແມ່ຄ້າເປັນຜູ້ຊອກ ເອົາສິ່ງຂອງເຄື່ອງຕ່າງໆມາຂາຍ (ແລກປ່ຽນເອົາເງິນ).
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ຕຳຫຼວດ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງນຸ່ງ, ໜ້າທີ່ ແລະ ຄວາມສຳຄັນຂອງຕຳຫຼວດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງນຸ່ງຂອງຕຳຫຼວດຈະລາຈອນເປັນແນວໃດ? ຕຳຫຼວດມີໜ້າທີ່ຫຍັງແດ່? ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຕຳຫຼວດຈະລາຈອນໃສ່ຊຸດສີກາກີ, ມີສາຍອຳນາດຢູ່ແຂນເສື້ອ, ມີໝາກຫວີດ ແລະ ບາແລດບ່າ (ທະນູບ່າ); ໜ້າທີ່ຮັກສາຄວາມເປັນລະບຽບໃນການສັນຈອນຕາມທ້ອງຖະໜົນ (ຍາມຕາມທາງສີ່ແຍກໄຟແດງ, ເປົ່າໝາກຫວີດໃຫ້ຄົນ, ລົດຂ້າມທາງ, ສຶກສາອົບຮົມຜູ້ເຮັດຜິດກົດລະບຽບບ້ານເມືອງ ແລະ ອຳນວຍຄວາມສະດວກໃນການຈະລາຈອນ); ຄວາມສຳຄັນຂອງ ຕຳຫຼວດເປັນຜູ້ປ້ອງກັນຄວາມສະຫງົບຂອງບ້ານເມືອງ, ຖ້າບໍ່ມີຕຳຫຼວດຈະລາຈອນກໍຈະພົບຄວາມຫຍຸ້ງຍາກ, ບ້ານເມືອງກໍຈະບໍ່ມີຄວາມສະຫງົບ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ໂດຍນຳໃຊ້ສີຕາມໃຈ.

# ທະຫານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງນຸ່ງ, ໜ້າທີ່ຂອງທະຫານ ແລະ ຄວາມສຳຄັນຂອງທະຫານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ທະຫານມີເຄື່ອງນຸ່ງແນວໃດ? ທະຫານມີໜ້າທີ່ຫຍັງແດ່? ທະຫານມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງນຸ່ງມີສີຂຽວ, ສີລາຍ, ມີບາແລດບ່າ (ທະນູບ່າ); ໜ້າທີ່ຂອງທະຫານປ້ອງກັນ ແລະ ປົກປັກຮັກສາຊາຍແດນ, ພູຜາປ່າໄມ້; ທະຫານອາກາດປ້ອງກັນນ່ານຟ້າ; ທະຫານເຮືອປ້ອງກັນນ່ານນ້ຳ; ຄວາມສຳຄັນຂອງທະຫານເປັນຜູ້ປ້ອງກັນ ແລະ ປົກປັກຮັກສາປະເທດຊາດບໍ່ໃຫ້ສັດຕູເຂົ້າມາທຳລາຍ ແລະ ອຳນວຍຄວາມສະດວກໃຫ້ແກ່ປະຊາຊົນທຳມາຫາກິນ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ກຳມະກອນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງກຳມະກອນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ກຳມະກອນມີໜ້າທີ່ເຮັດຫຍັງ? ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງນຸ່ງກຳມະກອນມີສີຟ້າ, ໂສ້ງຂາຍາວ, ເສື້ອແຂນຍາວ; ໜ້າທີ່ຂອງກຳມະກອນກໍ່ສ້າງແມ່ນປຸກສ້າງ ແລະ ສ້ອມແປງບ້ານເຮືອນ; ກຳມະກອນໂຮງງານແມ່ນຜະລິດເຄື່ອງໃຊ້; ຄວາມສຳຄັນຂອງກຳມະກອນເຮັດໃຫ້ພໍ່ແມ່ປະຊາຊົນມີເຄື່ອງໃຊ້, ມີເຮືອນຢູ່, ມີສັດຂີ່ໄປມາສະດວກສະບາຍ.
- ໃຫ້ເດັກນ້ອຍທາສີຮູບພາບຄືນໂດຍນຳໃຊ້ສີຕາມໃຈ.

# ຊ່າງເສີມສວຍ, ຊ່າງແປງລົດ ແລະ ຊ່າງຕັດເຄື່ອງ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກໜ້າທີ່ຂອງຊ່າງ, ເສີມສວຍ, ຊ່າງແປງລົດ ແລະ ຊ່າງຕັດເຄື່ອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ແຕ່ລະຊ່າງມີໜ້າທີ່ເຮັດຫຍັງ? ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊ່າງເສີມສວຍມີໜ້າທີ່ຕັດຜົມ, ສອຍຜົມ, ສະຜົມ, ແຕ່ງໜ້າ, ຕັດເລັບຕີນ, ເລັບມື; ຊ່າງຕັດເຄື່ອງມີໜ້າທີ່ອອກແບບ, ຕັດ, ຫຍິບເຄື່ອງນຸ່ງແມ່ຍິງ, ຜູ້ຊາຍ (ໂສ້ງ, ເສື້ອ, ສິ້ນ, ກະໂປງ); ຊ່າງແປງລົດມີໜ້າທີ່ແປງລົດທຸກຊະນິດເຊັ່ນສູບລົມ, ຈອດຢາງລົດ, ແປງຈັກລົດ, ສ້ອມແປງ ແລະ ຕົບແຕ່ງລົດໃຫ້ຈົບງາມ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ສິລະປະວັດທະນະທຳ ແລະ ວັນບຸນປະເພນີ













## ຫົວຂໍ້ການຮຽນອາທິດທີ 3 ສິລະປະວັດທະນະທຳ ແລະ ວັນບຸນປະເພນີ:

1. ສິລະປະວັນນະຄະດີ ແລະ ເຄື່ອງດົນຕີພື້ນເມືອງ.
2. ແບບຫຼິ້ນ ແລະ ຫັດຖະກຳພື້ນເມືອງ.
3. ບຸນເຂົ້າພັນສາ ແລະ ອອກພັນສາ.
4. ບຸນພະເວດ ແລະ ປີໃໝ່ລາວ.

# ສິລະປະວັນນະຄະດີ ແລະ ເຄື່ອງດົນຕີພື້ນເມືອງ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສິລະປະວັນນະຄະດີ, ເຄື່ອງດົນຕີພື້ນເມືອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍຂັບ, ລຳ, ຮ້ອງເພງ ແລະ ຟ້ອນບໍ? ເຄີຍເຫັນເຄື່ອງດົນຕີພື້ນເມືອງບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສິລະປະວັນນະຄະດີພື້ນເມືອງມີຂັບ, ລຳຂອງແຕ່ລະພາກເຊັ່ນ: ເໜືອ ຂັບຊຳເໜືອ, ຂັບທຸ້ມຫຼວງພະບາງ, ຂັບຊຽງຂວາງ; ພາກກາງ ຂັບງື່ມ, ລຳພູໄທ, ລຳບ້ານຊອກ, ລຳຄອນສະຫວັນ, ລຳມະຫາໄຊ, ລຳຕັ່ງຫວາຍ; ພາກໃຕ້ລຳສາລະວັນ, ລຳສີພັນດອນ, ລຳລ່ອງ; ເພງຈຳປາເມືອງລາວ, ເພງດອກບົວທອງ, ເພງອື່ນໆຂອງແຕ່ລະທ້ອງຖິ່ນ; ຟ້ອນອວຍພອນ, ຟ້ອນລາວແພນ, ຟ້ອນຈຳປາເມືອງລາວ ແລະ ຟ້ອນອື່ນໆຂອງແຕ່ລະທ້ອງຖິ່ນ; ເຄື່ອງດົນຕີພື້ນເມືອງມີແຄນ, ກອງ, ລະນາດ, ຊໍ, ສິ່ງ, ແສ່ງ, ຂຸ່ຍ, ຄ້ອງ ແລະ ອື່ນໆ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ເຄື່ອງດົນຕີ ໂດຍນຳໃຊ້ສີຕາມໃຈ.

# ຫັດຖະກຳພື້ນເມືອງ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຫັດຖະກຳປັ້ນ ແລະ ຈັກສານ; ເຝິກທັກສະການເວົ້າແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນເຄື່ອງຫັດຖະກຳແບບນີ້ບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງຫັດຖະກຳພື້ນເມືອງມີຫັດຖະກຳຕ່ຳແຜ່ນ ຜ້າສະໄຫຼ້ງ, ຜ້າປູໂຕະ, ຜ້າບ່ຽງ, ຜ້າຂາວມ້າ ແລະ ສິ້ນ; ຫັດຖະກຳຖັກແສ່ວ, ແສ່ວຕີນສິ້ນ, ຜ້າປູໂຕະ, ຖັກເສື້ອກັນໜາວ.ຫັດຖະກຳປັ້ນ ມີໝໍ້, ໄຫ, ຄົກ, ໂຖດອກໄມ້, ເຕົ້າດອກໄມ້; ຫັດຖະກຳຈັກສານມີກະດົ້ງ, ຂ້ອງ, ໄຊ, ຕິບເຂົ້າ, ພາເຂົ້າ, ຫວດ, ເຂີງ ແລະ ອື່ນໆ.
- ໃຫ້ເດັກນ້ອຍທາສີຮູບຫັດຖະກຳປັ້ນ ແລະ ຈັກສານ ໂດຍນຳໃຊ້ສີຕາມໃຈ.

# ແບບຫຼິ້ນພື້ນເມືອງ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກແບບຫຼິ້ນ ແລະ ຫັດຖະກຳພື້ນເມືອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ແບບຫຼິ້ນພື້ນເມືອງມີຫຍັງແດ່? ຫຼານເຄີຍຫຼິ້ນແບບນີ້ບໍ? ຫຼາຍເຄີຍເຫັນເຄື່ອງຫັດຖະກຳພື້ນເມືອງບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ແບບຫຼິ້ນພື້ນເມືອງ ມີຫຼິ້ນເຕັ້ນເສືອຂ້າມຫ້ວຍ, ເຊື່ອງຜ້າ, ງູກິນຂຽດ, ໝາກຄອນ ແລະ ແບບຫຼິ້ນອື່ນໆໃນທ້ອງຖິ່ນ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ເຄື່ອງຫັດຖະກຳ ໂດຍນຳໃຊ້ສີຕາມໃຈ.

# ບຸນເຂົ້າພັນສາ ແລະ ອອກພັນສາ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸນເຂົ້າ, ອອກພັນສາ ແລະ ການສະເຫຼີມສະຫຼອງ; ເຝິກທັກສະ ການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ບຸນເຂົ້າພັນສາ ແລະ ອອກພັນສາກົງກັບເດືອນໃດ? ຫຼານເຄີຍໄປຕັກບາດ ແລະ ໄຫຼເຮືອໄປບໍ່?
- ໃຫ້ເດັກນ້ອຍ ແລະ ຄູ ສະຫຼຸບ: ບຸນເຂົ້າພັນສາກົງກັບເດືອນກໍລະກົດຫຼືເດືອນ 8 ເພັງ (ຂຶ້ນ 15 ຄ່ຳ ເດືອນ 8 ລາວ)ເປັນວັນທາງພຸດທະສາສະໜາ, ຕອນເຊົ້າ ເພິ່ນໃສ່ບາດ, ຕອນກາງຄືນມີການຄົບວົງນ ແລະ ວຽນທຽນ (ແຫ່ດອກໄມ້); ບຸນອອກພັນສາກົງກັບເດືອນຕຸລາ ຫຼື ເດືອນ 11 ເພັງ (ຂຶ້ນ 15 ຄ່ຳ ເດືອນ 11 ລາວ) ວັນທາງພຸດທະສາສະໜາ, ຕອນເຊົ້າເພິ່ນໃສ່ບາດ, ຕອນກາງຄືນມີການຄົບວົງນ ແລະ ໄຫຼເຮືອໄຟ ຫຼື ລອຍກະທົງ.
- ໃຫ້ເດັກນ້ອຍທາສີຮູບພາບວັນບຸນຕ່າງໆ ໂດຍນຳໃຊ້ສີຕາມໃຈ.

# ບຸນພະເວດ ແລະ ປີໃໝ່ລາວ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸນພະເຫວດ, ບຸນປີໃໝ່ລາວ ແລະ ການສະເຫຼີມສະຫຼອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເຂົາເຈົ້າກຳລັງເຮັດຫຍັງ? ນີ້ແມ່ນບຸນ ຫຍັງ? ບຸນພະເວດ ແລະ ບຸນປີໃໝ່ລາວກົງກັບວັນ, ເດືອນໃດ? ບ້ານຫຼານມີການສະເຫຼີມສະຫຼອງບຸນພະເວດ ແລະ ບຸນປີໃໝ່ລາວແບບນີ້ບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸນພະເວດກົງກັບເດືອນ 4 ຂອງລາວ (ເດືອນມີນາ) ຕອນເຊົ້າຕັກບາດ, ຟັງເທດເລື່ອງພະເວດສັນດອນ, ຕອນບ່າຍເພິ່ນແຫ່ກັນຫຼອນ ແລະ ບາງທ້ອງຖິ່ນເພິ່ນໄດ້ເຮັດພິທີແຫ່ພະເວດເຂົ້າເມືອງ; ບຸນປີໃໝ່ລາວກົງກັບເດືອນ 5 ລາວ (ວັນທີ 14-16 ເດືອນເມສາ), ເພິ່ນສະເຫຼີມສະຫຼອງດ້ວຍການຫົດສົງພະພຸດທະຮູບ, ບາສີສູ່ຂວັນ, ຫົດນ້ຳອວຍພອນເຊິ່ງກັນ ແລະ ກັນ, ບາງທ້ອງຖິ່ນເພິ່ນໄດ້ແຫ່ນາງສັງຂານ.
- ໃຫ້ເດັກນ້ອຍທາສີຮູບພາບບຸນຕ່າງໆ ໂດຍນຳໃຊ້ສີຕາມໃຈ.

# ປະເທດລາວ ແລະ ວັນສຳຄັນຂອງຊາດ













## ຫົວຂໍ້ການຮຽນອາທິດທີ 4 ປະເທດລາວ ແລະ ວັນສຳຄັນຂອງຊາດ:

1. ປະເທດລາວ.
2. ວັນສຳຄັນຂອງຊາດ.
3. ວັນແມ່ຍິງ ແລະ ວັນຄູ.
4. ວັນກຳມະກອນ ແລະ ວັນສ້າງຕັ້ງກອງທັບ.
5. ວັນເດັກນ້ອຍສາກົນ.

# ປະເທດລາວ ແລະ ແຂວງຕ່າງໆ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ບ້ານ, ເມືອງ, ແຂວງທີ່ຕົນອາໄສຢູ່; ຊື່ເຕັມ, ຊື່ຫຍໍ້ຂອງປະເທດ, ແຂວງໃນປະເທດລາວ; ຝຶກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ບ້ານ, ເມືອງ, ແຂວງຂອງຫຼານອາໄສຢູ່ ຊື່ວ່າແນວໃດ? ຊື່ເຕັມ ແລະ ຊື່ຫຍໍ້ຂອງປະເທດລາວເອີ້ນວ່າແນວໃດ? ປະເທດລາວມີຈັກແຂວງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ບ້ານ..., ເມືອງ... ແລະ ແຂວງ... ທີ່ຕົນອາໄສຢູ່; ຊື່ເຕັມຂອງປະເທດລາວແມ່ນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຊື່ຫຍໍ້: ສ. ປ. ປ. ລາວ; ປະເທດລາວມີ 18 ແຂວງ: 1. ນະຄອນຫຼວງ; 2. ແຂວງຜົ້ງສາລີ; 3. ແຂວງຫຼວງນໍ້າ ທາ; 4. ແຂວງອຸດົມໄຊ; 5. ແຂວງບໍ່ແກ້ວ; 6. ແຂວງຫຼວງພະບາງ; 7. ແຂວງຫົວພັນ; 8. ແຂວງໄຊຍະບູລີ; 9. ແຂວງຊຽງຂວາງ; 10. ແຂວງວຽງຈັນ; 11. ແຂວງບໍລິຄໍາໄຊ; 12. ແຂວງຄໍາມ່ວນ; 13. ແຂວງສະຫວັນນະເຂດ; 14. ແຂວງສາລະວັນ; 15. ແຂວງຈໍາປາສັກ; 16. ແຂວງເຊກອງ; 17. ແຂວງອັດຕະປື; 18. ແຂວງໄຊສົມບູນ.
- ໃຫ້ເດັກນ້ອຍທາສີຮູບພາບບ້ານ ໂດຍນໍາໃຊ້ສີຕາມໃຈ.

# ວັນຊາດລາວ

## ນ້ຳໃຈວັນຊາດທີ 2 ທັນວາໝັ້ນຍືນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະດັບປະດາອາຄານສະຖານທີ່ໃນການສະຫຼອງວັນຊາດ, ສີຂອງທຸງຊາດ, ທຸງທິວ, ຄຳຂວັນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນປະດັບປະດາສະຖານທີ່ແນວໃດໃນການສະຫຼອງວັນຊາດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະດັບປະດາອາຄານສະຖານທີ່ໃນວັນຊາດຕ້ອງມີທຸງຊາດລາວ ແລະ ທຸງທິວ; ທຸງຊາດລາວມີວົງເດືອນສີຂາວຢູ່ທາງກາງ, ສີແດງອ້ອມວົງເດືອນ ແລະ ສີຟ້າຢູ່ສອງຂ້າງ; ທຸງທິວແມ່ນທຸງສີ ເຊິ່ງແຕ່ລະຜືນຈະມີສີແດງ, ຟ້າ, ເຫຼືອງ, ຂຽວ, ບົວ; ຄຳຂວັນ: ນ້ຳໃຈວັນຊາດທີ 2 ທັນວາໝັ້ນຍືນ.
- ໃຫ້ເດັກນ້ອຍທາສີຮູບທຸງຊາດ, ທຸງທິວຕາມສີຂອງທຸງ ແລະ ທາສີຮູບພາບອາຄານ ໂດຍນຳໃຊ້ສີຕາມໃຈ.

# ທຸງຊາດໃນກຸ່ມປະເທດອາຊຽນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບັນດາທຸງຊາດແຕ່ລະປະເທດໃນກຸ່ມອາຊຽນ; ເຝິກທັກສະການເວົ້າ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ທຸງຊາດໃນປະເທດກຸ່ມອາຊຽນມີທຸງຊາດປະເທດໃດແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບັນດາທຸງຊາດຂອງແຕ່ລະປະເທດໃນກຸ່ມອາຊຽນມີທຸງປະເທດລາວ, ຫວຽດນາມ, ກຳປູເຈຍ, ໄທ, ມຽນມ້າ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ບຣູໄນ ແລະ ສິງກະໂປ (ສີເປັນເອກະລັກຂອງແຕ່ລະປະເທດ).

# ການສະເຫຼີມສະຫຼອງວັນຊາດ








**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວັນຊາດ ແລະ ການສະເຫຼີມສະຫຼອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວັນຊາດກົງກັບວັນທີ, ເດືອນໃດ? ຫຼານເຄີຍເຫັນການສະເຫຼີມສະຫຼອງວັນຊາດບໍ? ສະເຫຼີມສະຫຼອງແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ວັນຊາດກົງກັບວັນທີ 2 ເດືອນທັນວາ (ເດືອນ12); ສະເຫຼີມສະຫຼອງດ້ວຍການໂຮມຊຸມນຸມ, ຟັງປາທະກະຖາ, ຊົມການວາງສະແດງຜົນງານການເຄື່ອນໄຫວຕ່າງໆ, ສະແດງສິລະປະວັນນະຄະດີ ແລະ ກິລາ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ໂດຍນຳໃຊ້ສີຕາມໃຈ.

# ວັນແມ່ຍິງ








**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວັນແມ່ຍິງສາກົນ ແລະ ການສະເຫຼີມສະຫຼອງ; ເຝິກທັກສະ ການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ວັນແມ່ຍິງກົງກັບວັນທີ, ເດືອນໃດ? ຫຼານເຄີຍເຫັນການສະເຫຼີມສະຫຼອງວັນແມ່ຍິງສາກົນບໍ? ສະເຫຼີມສະຫຼອງແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ວັນແມ່ຍິງສາກົນແມ່ນກົງກັບວັນທີ 8 ເດືອນມີນາ (ເດືອນ 3); ສະເຫຼີມສະຫຼອງດ້ວຍການຟັງປາຖະກະຖາ, ມອບຊໍ່ດອກໄມ້, ອວຍພອນແມ່ຍິງ, ສະແດງສິລະປະ ແລະ ແຂ່ງຂັນກິລາ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ວັນຄູ








**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວັນຄູ ແລະ ການສະເຫຼີມສະຫຼອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວັນຄູກົງກັບວັນທີ, ເດືອນໃດ? ຫຼານເຄີຍມອບດອກໄມ້ໃຫ້ຄູໃນວັນຄູບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ວັນຄູແມ່ນກົງກັບວັນທີ 7 ເດືອນຕຸລາ (ເດືອນ10); ສະເຫຼີມສະຫຼອງດ້ວຍການຟັງປາທະກະຖາ, ມອບຊໍ່ດອກໄມ້, ອວຍພອນຄູ, ສະແດງສິລະປະ ແລະ ກິລາ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ວັນກຳມະກອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວັນກຳມະກອນສາກົນ ແລະ ການສະເຫຼີມສະຫຼອງ; ເຝິກທັກສະ ການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວັນກຳມະກອນກົງກັບວັນທີ, ເດືອນໃດ? ຫຼານເຄີຍມອບດອກໄມ້ໃຫ້ກຳມະກອນບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ວັນກຳມະກອນສາກົນກົງກັບວັນທີ 1 ເດືອນພຶດສະພາ (ເດືອນ 5); ສະເຫຼີມສະຫຼອງດ້ວຍການມອບຊໍ່ດອກໄມ້, ອວຍພອນໃຫ້ກຳມະກອນ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ວັນສ້າງຕັ້ງກອງທັບປະຊາຊົນລາວ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວັນສ້າງຕັ້ງກອງທັບປະຊາຊົນລາວ ແລະ ການສະເຫຼີມສະຫຼອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ວັນສ້າງຕັ້ງກອງທັບປະຊາຊົນລາວກົງກັບວັນທີ, ເດືອນໃດ? ຫຼານເຄີຍມອບດອກໄມ້ໃຫ້ທະຫານບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ວັນສ້າງຕັ້ງກອງທັບປະຊາຊົນລາວກົງກັບວັນທີ 20 ເດືອນມັງກອນ (ເດືອນ1); ສະເຫຼີມສະຫຼອງດ້ວຍການຟັງການເລົ່າມູນເຊື້ອ; ອວຍພອນ, ລົງຢ້ຽມຢາມທະຫານ, ມອບຂອງຂວັນ, ສະແດງສິລະປະວັນນະຄະດີ ແລະ ແຂ່ງຂັນກິລາ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.

# ວັນເດັກນ້ອຍສາກົນ








**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວັນເດັກນ້ອຍສາກົນ ແລະ ການສະເຫຼີມສະຫຼອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວັນເດັກກົງກັບວັນທີ, ເດືອນໃດ? ຫຼານເຄີຍຮັບຂອງຂວັນບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ວັນເດັກນ້ອຍສາກົນກົງກັບວັນທີ 1 ເດືອນມິຖຸນາ (ເດືອນ 6); ສະເຫຼີມສະຫຼອງດ້ວຍການສະແດງສິລະປະວັນນະຄະດີ, ແຂ່ງຂັນກິລາ, ມອບຂອງຂວັນໃຫ້ເດັກ, ກວດສຸຂະພາບ ແລະ ພາເດັກໄປທັດສະນະສຶກສາສະຖານທີ່ຕ່າງໆ ແລະ ເດັກແຂ່ງຂັນແຕ້ມຮູບ.
- ໃຫ້ເດັກນ້ອຍທາສີຮູບພາບຄືນ ໂດຍນຳໃຊ້ສີຕາມໃຈ.